KHAMMESOUK et al. (2023). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 9. Issue 2. Apr – Jun 2023. Page 234 – 245

# ຜົນກະທົບຂອງໂຄງການອະນຸລັກອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງປະຊາຊົນຢູ່ ເມືອງຮ້ຽມ, ແຂວງຫົວພັນ

**ຄ່ອງທອງ ຄໍາມີສຸກ[1], ບຸນທະວີ ສີພັນທອງ, ຈັນສະໝອນ ແສງດາລາ ແລະ ສຸດຖາວອນ ສີອຸດົມພັນ**

*ພາກວິຊາ ເສດຖະສາດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

*[1]ຕິດຕໍ່ພົວພັນ: ຊື່ ແລະ ນາມສະກຸນ ຄ່ອງທອງ ຄໍາມີສຸກ, ກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ພະແນກກະສິກໍາ ແລະປ່າໄມ້ ແຂວງ ຫົວພັນ, ເບີໂທ: 020 2996 8999, ອີເມວ:* Khongthong999@gmail.com

**ຂໍ້ມູນບົດຄວາມ:**
*ການສົ່ງບົດ: 23 ເມສາ 2023*
*ການປັບປຸງ: 31 ພຶດສະພາ 2023*
*ການຕອບຮັບ: 10 ມິຖຸນາ 2023*

**ບົດຄັດຫຍໍ້**

ການຄົ້ນຄວ້າກ່ຽວກັບ ຜົນກະທົບຂອງໂຄງການອະນຸລັກອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງປະຊາຊົນຢູ່ ເມືອງຮ້ຽມ, ແຂວງຫົວພັນ. ໂດຍມີຈຸດປະສົງຂອງຈຸດປະສົງຂອງການຄົ້ນຄວ້າວິໄຈຄື: 1) ການກວດສອບຄວາມສໍາພັນຂອງບັນດາຕົວປ່ຽນອິດສະຫຼະໃນແບບຈໍາລອງຜົນກະທົບດ້ວຍວິທີ Pearson Correlation Coefficients. 2) ຜົນກະທົບຂອງໂຄງການອະນຸລັກ ຢູ່ກອງຄຸ້ມຄອງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງປະຊາຊົນຢູ່ ເມືອງຮ້ຽມ ແຂວງຫົວພັນ.

ຈາກຜົນການວິເຄາະຜົນກະທົບຂອງໂຄງການອະນຸລັກອຸດທິຍານແຫ່ງຊາດນໍ້າແອັດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງປະຊາຊົນເມືອງຮ້ຽມ ແຂວງຫົວພັນ ພົບວ່າ: ໃນການກວດສອບຄວາມສໍາພັນລະຫວ່າງຕົວປ່ຽນອິດສະຫຼະແຕ່ລະຕົວຈະໃຊ້ການຫາຄ່າສໍາປະສິດສະຫະສໍາພັນຂອງຕົວປ່ຽນອິດສະຫຼະດ້ວຍວິທີຂອງ ເພຍສັນ (Pearson Correlation Coefficients) ຈາກຜົນການປະມານຄ່າສໍາປະສິດສະຫະສໍາພັນ ເຫັນໄດ້ວ່າ ຄ່າສໍາປະສິດສະຫະສໍາພັນ ຂອງຕົວປ່ຽນອິດສະຫຼະດ້ວຍກັນທີ່ມີຄ່າສູງກວ່າ 0.80 ຫຼື 80% ຂຶ້ນໄປ ແມ່ນບໍ່ມີເລີຍ ດ້ວຍລະດັບຄວາມເຊື່ອໝັ້ນ 99% ແລະ 95%, ສະແດງວ່າຕົວປ່ຽນອິດສະຫຼະມີຄວາມສໍາພັນກັນແຕ່ບໍ່ໄດ້ມີຄວາມສໍາພັນກັນສູງ ຫຼື ສູງເກີນໄປມາດຕະຖານທີ່ທາງສະຖິຕິໄດ້ກໍານົດໄວ້ຈຶ່ງກໍໃຫ້ເກີດພາວະ Multi-collinearity. ແລະຈາກຜົນການວິເຄາະຜົນກະທົບຂອງໂຄງການອະນຸລັກອຸດທິຍານແຫ່ງຊາດນໍ້າແອັດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງປະຊາຊົນເມືອງຮ້ຽມ ແຂວງຫົວພັນ ໃນ 7 ບ້ານເປົ້າໝາຍ ເຊິ່ງຕົວປ່ຽນປະກອບມີ 2 ດ້ານໃຫຍ່ຄື: ປັດໄຈດ້ານອາຊີບ ມີ 2 ປັດໄຈ ແລະ ປັດໄຈດ້ານການຖືຄອງທີ່ດິນ ປະກອບມີ 4 ດ້ານ ເປັນຕົວປ່ຽນຮ່ວມພະຍາກອນ ຕົວປ່ຽນຕາມ ພົບວ່າ: ປັດໄຈທີ່ມີຜົນຕໍ່ຜົນກະທົບຂອງໂຄງການອະນຸລັກອຸທິຍານແຫ່ງຊາດນໍ້າແອດ-ພູເລີຍ ຕໍ່ກັບ ສະພາບເສດຖະກິດຂອງຄົວເຮືອນໃນເຂດກຸ່ມບ້ານເປົ້າໝາຍຂອງໂຄງການ ຫຼາຍກວ່າໝູ່ ນັ້ນແມ່ນ ຕົວປ່ຽນ ເນື້ອທີ່ດິນທໍາການຜະລິດ (ດິນນາ, ດິນໄຮ່, ດິນສວນ). ສະນັ້ນ, ທາງໂຄງການຄວນມີການຈັດສັນທີ່ດິນທໍາການຜະລິດໃຫ້ກັບປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ເພື່ອໃຫ້ເຂົາເຈົ້າໄດ້ມີທີ່ດິນທໍາການຜະລິດ ແລະ ສາມາດສ້າງລາຍຮັບໃຫ້ກັບຄອບຄົວ, ນອກນັ້ນຄວນມີການສະໜັບສະໜູນໃນດ້ານການຝຶກອົບຮົມທາງດ້ານເຕັກນິກວິຊາການກ່ຽວກັບການປູກຝັງ, ສະໜອງແນວພັນພືດທີ່ໄດ້ມີການປັບປຸງສະມັດຕະພາບ, ການຈັດສັນ ແລະ ປັບປຸງລະບົບນໍ້າ, ເຕັກນິກການປ້ອງກັນ ແລະ ປາບສະຕູພືດ, ມີເຄື່ອງຮັບໃຊ້ໃນການຜະລິດທີ່ຂ້ອນຂ້າງທັນສະໄໝ ແລະ ອື່ນໆໃຫ້ແກ່ພວກເຂົາ, ສິ່ງຜົນເຮັດໃຫ້ລາຍຮັບຈາກການປູກຝັງສ່ວນນີ້ເພີ່ມຂຶ້ນ.

**ຄໍາສັບທີ່ສໍາຄັນ:** *ຜົນກະທົບ, ອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ, ສະພາບເສດຖະກິດ*

# The Impact of the Nam Et - Phou Louey National Park Conservation Project on the Economic Condition of the People in Hiem District, Houaphan Province

**Khongthong KHAMMESOUK[1*], Dr. Bounthavy SIPHANTHONG[1], Chansamone SENGDARA[1], Soutthavone SIOUDOMPHAN[1]**

*Department of Economics Faculty of Economics and Tourism Souphanouvong University, Lao PDR*

[1*]***Correspondence:*** *Khongthong KHAMMESOUK, Law enforcement head of unit in NEPL Department of Agriculture and Forestry Houaphan Province, Tel: 020 2996 8999, E-mail: Khongthong999@gmail.com*
[1]*Department of Economics Faculty of Economics and Tourism Souphanouvong University*

***Article Info:***
*Submitted: Apr 23, 2023*
*Revised: May 31, 2023*
*Accepted: Jun 10, 2023*

**Abstract**

Research on the impact of the Nam Et - Phou Louey National Park Conservation Project on the economic condition of the people in Hiem District, HuaPhan Province The aim of the research objectives is: 1) Checking the relationship between the independent variables in the effect model using the Pearson correlation coefficients method 2) The impact of the conservation project at the Nam Et - Phou Louey National Park Management Team on the economic condition of the people in Hiem District, HuaPhan Province.

From the results of the analysis of the impact of the Nam Et - Phou Louey National Park Conservation Project on the economic condition of the people of Haim District, Huafan Province, it was found that, in checking the relationship between each independent variable, the Pearson correlation coefficients will be used to find the correlation coefficient of the independent variable by the method of Pearson. 99% and 95%, showing that the independent variables are related but not highly correlated or too high, the standard set by statistics to cause multi-collinearity. And from the results of the analysis of the impact of the Nam Et - Phou Louey National Park Conservation Project on the economic condition of the people of Hyem District, HuaPhan Province, in the 7 target villages, the variables include 2 major aspects, namely: occupational factors with 2 factors and land holding factors with 4 aspects as co-variables. The following variables were found: The factors that affect the effect of the Nam Et - Phou Louey National Park Conservation Project on the economic condition of households in the target villages of the project are more than the production variable (farmland, Hai land, garden land). Therefore, the project should allocate productive land to the affected people so that they can have productive land and generate income for their families. Also, there should be support in terms of technical training on farming, providing plant varieties with improved quality, allocation and improvement of water systems, pest control and pest control techniques, modern production equipment, etc. for them, resulting in an increase in the income from farming.

**Keywords:** *Impact, Nam Et - Phou Louey National Park, Economic condition*

## 1. ພາກສະເໜີ

ຊັບພະຍາກອນປ່າໄມ້ມີບົດບາດສຳຄັນຕໍ່ການຢູ່ລອດຂອງປະຊາຊົນບັນດາເຜົ່າທີ່ອາໄສຢູ່ເຂດຊົນນະບົດຫ່າງໄກສອກຫຼີກ, ອາຫານຂອງປະຊາຊົນສ່ວນຫຼາຍແມ່ນອາຫານຈາກປ່າເຊັ່ນ: ຊີ້ນສັດປ່າ, ຜັກປ່າ, ໜໍ່ໄມ້, ເຫັດ, ປາ ແລະ ອື່ນໆ. ປັດຈຸບັນເຖິງວ່າສະພາບເສດຖະກິດຂອງປະເທດເຮົາໄດ້ມີການພັດທະນາແຕ່ປະຊາຊົນໃນທ້ອງຖິ່ນຍັງມີການນຳໃຊ້ເຄື່ອງປ່າຂອງດົງ ບໍ່ວ່າທາງກົງ ຫຼື ທາງອ້ອມຢ່າງຫຼວງຫຼາຍເຂົ້າໃນການດຳລົງຊີວິດປະຈຳວັນໂດຍການນຳໃຊ້ພືດຫລື ຜັກປ່າມາເປັນອາຫານ, ຢາປົວພະຍາດ, ນຳໃຊ້ໄມ້ມາເປັນວັດສະດຸໃນການປຸກສ້າງ, ເຊື້ອເພີງ, ຫັດຖະກຳຈັກສານ ແລະ ອື່ນໆຢູ່ເປັນປະຈຳ, ເຖິງແມ່ນວ່າຊັບພະຍາກອນປ່າໄມ້ນັ້ນຈະມີຄວາມສຳຄັນທີ່ສຸດຕໍ່ການດຳລົງຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນກໍ່ຕາມ, ແຕ່ກໍ່ພົບເຫັນວ່າບັນດາຊະນິດພັນພືດ ແລະ ສັດໃນປ່າທຳມະຊາດທີ່ເຄີຍອຸດົມສົມບູນນັ້ນມີຈຳນວນຫຼຸດໜ້ອຍຖອຍລົງຢ່າງລຽນຕິດ, ຍ້ອນວ່າຈຳນວນປະຊາກອນນັບມື້ນັບເພີ່ມຂຶ້ນຈຶ່ງເຮັດໃຫ້ມີການຂະຫຍາຍເນື້ອທີ່ທຳການຜະລິດຫຼາຍຂຶ້ນ ແລະ ຍັງມີການບຸກລຸກເນື້ອທີ່ປ່າໄມ້ຢ່າງແຜ່ຫຼາຍ, ຄວາມຕ້ອງການຂອງຕະຫຼາດເຄື່ອງປ່າຂອງດົງ, ສັດປ່າກໍ່ເພີ່ມຫຼາຍຂຶ້ນ. ດັ່ງນັ້ນ, ເພື່ອແກ້ໄຂບັນຫາດັ່ງກ່າວ ພັກ - ລັດຖະບານໄດ້ວາງນະໂຍບາຍກ່ຽວກັບການເພີ່ມທະວີການປົກປັກຮັກສາ, ວາງແຜນຈັດສັນປ່າຜະລິດເພື່ອການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ໃຫ້ຍືນຍົງ ຫຼື ນຳໃຊ້ໃຫ້ຖືກຕ້ອງຕາມລະບຽບຫລັກການ. ພັກ - ລັດຖະບານໄດ້ຮ່ວມມືກັບທັງພາຍໃນ ແລະ ອົງການຈັດຕັ້ງສາກົນໃນການຈັດຕັ້ງເຜີຍແຜ່, ຊຸກຍູ້ໃຫ້ປະຊາຊົນເຂົ້າມາມີສ່ວນຮ່ວມໃນການປົກປັກຮັກສາ, ຮ່ວມແລກປ່ຽນຄວາມຄິດຄວາມເຫັນ, ຄວາມຮູ້ປະສົບການຕ່າງໆ ແລະ ຄວາມເຂົ້າໃຈຕໍ່ການຄຸ້ມຄອງນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ (ກົມປ່າໄມ້, 2019).

ລັດຖະບານແຫ່ງ ສປປ ລາວ ໄດ້ດຳເນີນນະໂຍບາຍການມີສ່ວນຮ່ວມກັບຊາວບ້ານໃນການພັດທະນາຍຸດທະສາດການອະນຸລັກ ແລະ ການພັດທະນາປັບປຸງຊີວິດການເປັນຢູ່ຂອງປະຊາຊົນແບບຍືນຍົງໂດຍຜ່ານຂະບວນການມີສ່ວນຮ່ວມຂອງປະຊາຊົນເຂົ້າໃນການຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ, ຍຸດທະສາດການອະນຸລັກຂອງລັດຖະບານແຫ່ງ ສປປ ລາວ ແມ່ນແນ່ໃສ່ການພັດທະນາການຄຸ້ມຄອງຈັດສັນໂດຍຜ່ານຮູບແບບການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ ເຊິ່ງແມ່ນຜູ້ທີ່ອາໄສໃນຂອບເຂດ ແລະ ມີພື້ນຖານຊີວິດການເປັນຢູ່ປະຈຳວັນອີງໃສ່ຊັບພະຍາກອນທີ່ມີຢູ່ໃນເຂດນັ້ນໆ, ແຜນດຳເນີນງານສິ່ງແວດລ້ອມ 2006 - 2010, ວຽກງານທີ 3 ກ່ຽວກັບວຽກງານການຄຸ້ມຄອງຊັບພະຍາກອນປ່າໄມ້ແບບຍືນຍົງໄດ້ເນັ້ນໃສ່ການສົ່ງເສີມມູນເຊື້ອອັນດີງາມຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງຊັບພະຍາກອນປ່າໄມ້, ສົ່ງເສີມ ແລະ ພັດທະນາຄວາມຮູ້ທ້ອງຖິ່ນໃຫ້ຊາວບ້ານ ຫຼື ມູນເຊື້ອອັນດີງາມຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງ ແລະ ນຳໃຊ້ຊີວະນາໆພັນ ເຊັ່ນ: ສຳຫຼວດຈັດສັນເຂດປ່າຜະລິດ ແລະ ຂຶ້ນບັນຊີຕຳລາຢາພື້ນເມືອງ, ຄວາມຮູ້ກ່ຽວກັບການຄັດເລືອກ ແລະ ຮັກສາແນວພັນຮັບໃຊ້ໃນການຜະລິດກະສິກຳ ແລະ ຫັດຖະກຳໃຫ້ຜະລິດຕະພັນທ້ອງຖິ່ນ, ຍຸດທະສາດປ່າໄມ້ຮອດປີ 2020 ໄດ້ຮັບຮອງເອົາປີ 2005 ກໍ່ເວົ້າເຖິງຄວາມສຳຄັນ ແລະ ຄວາມຈຳເປັນຂອງຊັບພະຍາກອນປ່າໄມ້ ຕໍ່ກັບການປັບປຸງຊີວິດການເປັນຢູ່ໃນທ້ອງຖິ່ນແບບຍືນຍົງ (ກະຊວງກະສິກຳ ແລະ ປ່າໄມ້, 2019).

ອຸທິຍານແຫ່ງຊາດນ້ຳແອດ - ພູເລີຍ ເປັນທີ່ຍອມຮັບຂອງສາກົນ ເພາະວ່າເປັນພື້ນທີ່ທີ່ມີຄວາມອຸດົມສົມບູນໄປດ້ວຍຊີວະນາໆພັນ, ສັດນ້ຳ - ສັດປ່ານາໆຊະນິດ ແລະ ຊັບພະຍາກອນປ່າໄມ້ ທີ່ມີຄວາມສຳຄັນ ຕໍ່ວົງສາຄະນາຍາດຂົງເຂດພາກພື້ນອາຊີຕາເວັນອອກສຽງໃຕ້ ແລະ ໃນໂລກ ເປັນອຸທິຍານແຫ່ງດຽວ ທີ່ເປັນຜືນປ່າແຫ່ງສຸດທ້າຍໃນອິນດູຈີນທີ່ຢັ້ງຢືນວ່າມີປະຊາກອນຕະກຸນ ເສືອ ຫຼາຍສາຍພັນ ທີ່ອາໄສ ແລະ ຂະຫຍາຍພັນຕາມທຳມະຊາດໄດ້ ແລະ ເປັນເຂດທີ່ສຳຄັນໃນການອະນຸລັກເສືອ, ທະນີແກ້ມຂາວ ແລະ ສັດປ່າໃກ້ຈະສູນພັນຫຼາຍຊະນິດ ເປັນບ່ອນສຶກສາຄົ້ນຄວ້າ ແລະ ຮອງຮັບຕໍ່ການປ່ຽນແປງດິນຟ້າອາກາດ. ນອກຈາກນັ້ນແລ້ວ ກໍ່ຍັງມີຄວາມສຳຄັນຕໍ່ການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າທີ່ອາໄສຢູ່ໃນ ແລະ ອ້ອມຂ້າງອຸທິຍານ ເຊິ່ງໄດ້ສະໜອງຜົນປະໂຫຍດ ທາງກົງ ແລະ ທາງອ້ອມ ຈາກຄວາມອຸດົມສົມບູນຂອງລະບົບນິເວດວິທະຍາໂດຍສະເພາະ

ແມ່ນການ ເປັນແຫຼ່ງສະໜອງອາຫານເພື່ອແກ້ໄຂໄພອຶດຫິວ , ອີກດ້ານໜຶ່ງຍັງເປັນທ່າແຮງໃຫ້ແກ່ການພັດທະນາແຫຼ່ງທ່ອງທ່ຽວແບບທຳມະຊາດ ເຊິ່ງເປັນ ແຫຼ່ງເກັບລາຍຮັບເພື່ອໄປປັບປຸງຊີວິດການເປັນຢູ່ຂອງຊຸມຊົນໃນທ້ອງຖິ່ນໃຫ້ດີຂຶ້ນ ນອກຈາກນັ້ນ ຍັງມີບັນດາສາຂາແມ່ນ້ຳໃຫຍ່ທີ່ອອກຈາກພູເລີຍ ເປັນບ່ອນສ້າງ ຊົນລະປະທານ ແລະ ເຂື່ອນພະລັງງານໄຟຟ້າ ພັດທະນາດ້ານກະສິກຳ, ເຮັດໃຫ້ເສດຖະກິດຂອງ ສປປ ລາວ ຈະເລີນເຕີບໂຕ ໝາຍຄວາມວ່າ: 1) ອຸທິຍານແຫ່ງຊາດມີຄວາມສຳຄັນຫຼາຍ ເພາະວ່າ ເປັນຕົ້ນກຳເນີດສາຍນ້ຳ ປຽບເໝືອນສາຍເລືອດບຳລຸງລ້ຽງປະຊາຊົນ, ເປັນບ່ອນຕອບສະໜອງ ໃນການປູກການລ້ຽງ ແລະ ຂົນສິ່ງໃຫ້ປະຊາຊົນເຂດດັ່ງກ່າວ. 2) ມີທີ່ຢູ່ອາໄສຂອງສັດປ່າ ຂະຫຍາຍພັນຕາມທຳມະຊາດ ສັດຕະກຸນເສືອຫຼາຍສາຍພັນ, ສັດຫາຍາກ ແລະ ໃກ້ຈະສູນພັນ. 3) ເປັນປ່າໄມ້ທີ່ສວຍສົດງົດງາມ ເປັນບ່ອນຢູ່ອາໄສ ຂອງສັດປ່າ ແລະ ການນຳໃຊ້ສອຍຂອງປະຊາຊົນເປັນຕົ້ນ ໄມ້ຟືນ, ສິ່ງປຸກສ້າງ ເຄື່ອງມືທຳການຜະລິດ ແລະ ຢາປົວພະຍາດ, ບ່ອນທຳການຜະລິດ ແລະ ລ້ຽງສັດ ນອກຈາກນັ້ນ ປ້ອງກັນການເຊາະເຈື່ອນ. 4) ເປັນສະຖານທີ່ ດັດປັບສະພາບອາກາດ ຈາກທາດກາກໂບນິກ ($Co_2$) ມາປ່ຽນເປັນ ($O_2$)ປຽບເໝືອນປອດຂອງໂລກ. 5) ເປັນສະຖານທີ່ ທີ່ມີຄວາມສົນໃຈຂອງນັກທ່ອງທ່ຽວເຂົ້າມາທ່ຽວຊົມ ແລະ ສ້າງວຽກເຮັດງານທຳໃຫ້ປະຊາ ຊົນມີລາຍຮັບເຂົ້າຄົວເຮືອນ. 6) ເປັນບ່ອນສຶກສາຄົ້ນຄວ້າວິທະຍາສາດ, ການສຶກສາ, ວິໄຈ ແລະ ການທົດລອງພືດ - ສັດປ່າຫາຍາກ ແລະ ເປັນຢາ ທີໃກ້ຈະສູນພັນ,ຈາກຫຼາຍມາຫາວິທະຍາໄລ ທົ່ວໂລກ. ປະຊາຊົນໃນເຂດອະນຸລັກ ອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ສ່ວນໃຫຍ່ມີອາຊີບເຮັດນາ, ລ້ຽງສັດ ແລະ ເກັບກູ້ເຄື່ອງປ່າຂອງດົງເພື່ອຊົມໃຊ້ ແລະ ຂາຍ. ໂດຍທີ່ລາຍໄດ້ສ່ວນໃຫຍ່ຂອງພວກເຂົາເຈົ້າແມ່ນໄດ້ມາຈາກການຂາຍສັດລ້ຽງ (ງົວ, ຄວາຍ, ໝູ, ເປັດ, ໄກ່) ແລະ ຂາຍເຄື່ອງປ່າຂອງດົງຕາມລະດູການ (ເຫັດເຜາະ, ຜັກຫວານ) ແລະ ສັດນ້ຳບາງປະເພດ (ປາ, ອ່ຽນ). ນອກຈາກນີ້, ບາງສ່ວນກໍ່ໄດ້ມາຈາກການຂາຍຜົນຜະລິດທາງດ້ານການກະເສດ (ເຂົ້າ, ສາລີ ແລະ ອື່ນໆ) ແລະ ການຂາຍເຄື່ອງຫັດຖະກຳຈຳນວນໜຶ່ງ (ສິ້ນ, ແພຕາກະໂລ, ສາດ, ຕິບເຂົ້າ ແລະ ອື່ນໆ). ນອກນັ້ນ, ປະຊາຊົນ ແມ່ນນຳໃຊ້ເນື້ອທີ່ດິນ ເຂົ້າໃນການຜະລິດກະສິກຳ ແລະ ສ່ວນໃຫຍ່ແມ່ນໄດ້ນຳໃຊ້ແຮງງານຄົນໃນຄອບຄົວໃນການອອກແຮງງານເທົ່ານັ້ນ.

ຍ້ອນເຫັນໄດ້ເຖິງບັນຫາ ແລະ ຄວາມສຳຄັນຂ້າງເທິງຄືແນວນັ້ນ, ປະກອບກັບໃນໄລຍະຜ່ານມາແມ່ນຍັງບໍ່ທັນໄດ້ມີການສຶກສາເພື່ອປະເມີນຜົນກະທົບຂອງໂຄງການຢ່າງລະອຽດເລິກເຊິ່ງເທື່ອ. ດັ່ງນັ້ນ, ຜູ້ສຶກສາຈຶ່ງມີຄວາມສົນໃຈຢາກຈະສຶກສາບັນຫາດັ່ງກ່າວພາຍໃຕ້ຫົວຂໍ້: ຜົນກະທົບຂອງໂຄງການອະນຸລັກ ຢູ່ກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງປະຊາຊົນຢູ່ ເມືອງຮ້ຽມ ແຂວງຫົວພັນ. ດັ່ງນັ້ນ, ເພື່ອເປັນການເຮັດໃຫ້ການດຳເນີນການຄົ້ນຄວ້າວິໄຈຄັ້ງນີ້ ເປັນໄປຕາມເປົ້າໝາຍ ແລະ ສະດວກຕໍ່ການຄົ້ນຄວ້າວິໄຈໂດຍຜູ້ສຶກສາມີຈຸດປະສົງຂອງການຄົ້ນຄວ້າວິໄຈຄື:

1) ການກວດສອບຄວາມສຳພັນຂອງບັນດາຕົວປ່ຽນອິດສະຫຼະໃນແບບຈຳລອງຜົນກະທົບດ້ວຍວິທີ Pearson Correlation Coefficients.

2) ຜົນກະທົບຂອງໂຄງການອະນຸລັກ ຢູ່ກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງປະຊາຊົນຢູ່ ເມືອງຮ້ຽມ ແຂວງຫົວພັນ.

## 2. ອຸປະກອນ ແລະ ວິທີການ

### 2.1 ວິທີການສຶກສາ ແລະ ວິເຄາະຂໍ້ມູນ

ການສຶກສາຄັ້ງນີ້, ເພື່ອໃຫ້ເຂົ້າເຖິງຂໍ້ມູນລະອຽດກ່ຽວກັບ ຜົນກະທົບຂອງໂຄງການອະນຸລັກ ຢູ່ກອງຄຸ້ມຄອງ ອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງປະຊາຊົນຢູ່ ເມືອງຮ້ຽມ ແຂວງຫົວພັນ ນັ້ນ, ຄະນະຜູ້ວິໄຈໄດ້ນຳໃຊ້ຂໍ້ມູນປະຖົມພູມ (Primary Data) ເປັນການລວບລວມຂໍ້ມູນຈາກການສຸ່ມຕົວຢ່າງ ແລ້ວນຳມາປະມວນຜົນດ້ວຍໂປແກຣມສຳເລັດຮູບທາງສະຖິຕິ ເພື່ອຄຳນວນຫາຄ່າສະເລ່ຍ (Mean) ແລະ ຄ່າຜິດດ່ຽງມາດຕະຖານ (Standard Devision) ໂດຍສະຖິຕິທີ່ນຳມາວິເຄາະໄດ້ແກ່ສະຖິຕິພັນລະນາ (Descriptive Statistic) ນຳມາໃຊ້ໃນການວິເຄາະຂໍ້ມູນກ່ຽວກັບ ສະພາບລາຍຮັບຈາກແຫຼ່ງຕ່າງໆ , ສະພາບການຖືຄອງທີ່ດິນ ແລະ ຂໍ້ມູນອື່ນໆ ທີ່ກ່ຽວຂ້ອງກັບອຸທິຍານນ້ຳແອດ-ພູເລີຍ. ນອກຈາກນັ້ນ, ຜູ້ສຶກສາຍັງ

ໄດ້ນຳໃຊ້ສະຖິຕິອ້າງອີງ (Inferential Statistic) ໂດຍສະແມ່ນ t-test (ທົດສອບຄວາມແຕກຕ່າງຂອງລາຍຮັບ, ລາຍຈ່າຍ ກ່ອນ ແລະ ຫຼັງ) ແລະ ສົມຜົນເສັ້ນການຖົດຖອຍ Multiple Regression ດ້ວຍວິທີກຳລັງສອງນ້ອຍສຸດ (OLS) ເຂົ້າໃນການວິເຄາະຜົນກະທົບຂອງໂຄງການອະນຸລັກອຸດທິຍານແຫ່ງຊາດນ້ຳແອັດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງປະຊາຊົນເມືອງຮ້ຽມ ແຂວງຫົວພັນ.

**2.2 ແບບຈຳລອງ Ordinary Least Square ຂອງຜົນກະທົບຂອງໂຄງການອະນຸລັກອຸດທິຍານແຫ່ງຊາດນ້ຳແອັດ-ພູເລີຍຕໍ່ກັບສະພາບເສດຖະກິດຂອງປະຊາຊົນເມືອງຮ້ຽມ ແຂວງຫົວພັນ.**

ແບບຈຳລອງທີ່ໃຊ້ໃນການສຶກສາຜົນກະທົບຂອງໂຄງການອະນຸລັກອຸດທິຍານແຫ່ງຊາດນ້ຳແອັດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງປະຊາຊົນເມືອງຮ້ຽມ ແຂວງຫົວພັນ ໃນຄັ້ງນີ້ ຜູ້ສຶກສາໄດ້ກຳນົດໃຊ້ແບບຈຳລອງ ແຮງແບບຈຳລອງທາງເສດຖະມິຕິ (Econometric Model) ແລະ ກຳນົດຈາກທິດສະດີ Impact Valuation in Practice, (World Bank, 2016) ເຊິ່ງປະກອບມີ 6 ຕົວປ່ຽນ ດັ່ງນີ້: ອາຊີບຫຼັກ, ອາຊີບສຳຮອງ, ເນື້ອທີ່ດິນນາ, ເນື້ອທີ່ດິນໄຮ່, ເນື້ອທີ່ດິນສວນ, ເນື້ອທີ່ໜອງປາ.

**ແບບຈຳລອງທາງຄະນິດສາດ**

$$RVE = f(X_1,\ X_2,\ X_3,\ X_4,\ X_5,\ X_6)$$

**ແບບຈຳລອງທາງເສດຖະມິຕິ (Econometric Model)**

ຈາກແບບຈຳລອງທາງຄະນິດສາດ ສາມາດສ້າງເປັນແບບຈຳລອງທາງເສດຖະມິຕິ OLS ໄດ້ດັ່ງນີ້:

$$\widehat{REV} = \beta_0 + \beta_1 X_1 + \beta_2 X_2 + \beta_3 X_3 + \beta_4 X_4 + \beta_5 X_5 + \beta_6 X_6 + \varepsilon_i \text{..................} \quad (1)$$

ໃນແບບຈຳລອງສະແດງເຖິງການພົວພັນລະຫວ່າງ ປັດໄຈອາຊີບ (ຫຼັກ ແລະ ສຳຮອງ) ແລະ ເນື້ອທີ່ດິນ (ນາ, ໄຮ່, ສວນ, ໜອງປາ) ທີ່ໄດ້ຮັບຜົນກະທົບ

**3. ຜົນໄດ້ຮັບ**

**3.1 ການກວດສອບຄວາມສຳພັນຂອງບັນດາຕົວປ່ຽນອິດສະຫຼະໃນແບບຈຳລອງຜົນກະທົບດ້ວຍວິທີ Pearson Correlation Coefficients.**

ການວິເຄາະການຖົດຖອຍພະຫຸຄູນ (Multiple Regression Analysis) ດ້ວຍວິທີ ກຳລັງສອງນ້ອຍສຸດ (OLS) ໂດຍນຳໃຊ້ຕົວປ່ຽນອິດສະທີ່ຄາດວ່າມີຜົນກະທົບຕໍ່ເສດຖະກິດຂອງປະຊາຊົນຈາກການສ້າງສ້າງຕັ້ງເຂດອະນຸລັກອຸທິຍານ ແຫ່ງຊາດ ນ້ຳແອດ-ພູເລີຍ ເນື່ອງຈາກປະຊາຊົນໃນ 7 ບ້ານເປົ້າໝາຍແມ່ນມີອາຊີບເປັນຊາວກະສິກອນສ່ວນຫຼາຍ ດັ່ງນັ້ນ, ຜູ້ສຶກສາຈຶ່ງກຳນົດຕົວປ່ຽນປະກອບມີ 2 ດ້ານໃຫຍ່ຄື: ປັດໄຈດ້ານອາຊີບ ມີ 2 ປັດໄຈ ແລະ ປັດໄຈດ້ານການຖືຄອງທີ່ດິນ ປະກອບມີ 4 ດ້ານ ເປັນຕົວປ່ຽນຮ່ວມພະຍາກອນ ຕົວປ່ຽນຕາມ. ເຊິ່ງຜ່ານການວິເຄາະສຳປະສິດສະຫະສຳພັນຂອງຕົວປ່ຽນອິດສະຫຼະດ້ວຍກັນ ແມ່ນໄດ້ຜົນຄືດັ່ງຕາຕະລຸ່ມນີ້:

ໃນການກວດສອບຄວາມສຳພັນລະຫວ່າງຕົວປ່ຽນອິດສະຫຼະແຕ່ລະຕົວຈະໃຊ້ການຫາຄ່າສຳປະສິດສະຫະສຳພັນຂອງຕົວປ່ຽນອິດສະຫຼະດ້ວຍວິທີຂອງ ເພຍສັນ (Pearson Correlation Coefficients) ໂດຍການໃຊ້ໂປຣແກຣມສຳເລັດຮູບ SPSS Version 22. ຈາກຜົນການປະມານຄ່າໃນ (ຕາະລາງ 3.1) ເຫັນໄດ້ວ່າ ຄ່າສຳປະສິດສະຫະສຳພັນໃນຮູບແບບ Correlation Matrix ຂອງຕົວປ່ຽນອິດສະຫຼະດ້ວຍກັນທີ່ມີຄ່າສູງກວ່າ 0.80 ຫຼື 80% ຂຶ້ນໄປ ແມ່ນບໍ່ມີເລີຍດ້ວຍລະດັບຄວາມເຊື່ອໝັ້ນ 99% ແລະ 95%, ສະແດງວ່າຕົວປ່ຽນອິດສະຫຼະມີຄວາມສຳພັນກັນແຕ່ບໍ່ໄດ້ມີຄວາມສຳພັນກັນສູງ ຫຼື ສູງເກີນໄປ ມາດຕະຖານທີ່ທາງສະຖິຕິໄດ້ກຳນົດໄວ້ຈົນກໍໃຫ້ເກີດພາວະ Multicollinearity. ດັ່ງນັ້ນ, ຈຶ່ງບໍ່ມີຄວາມຈຳເປັນທີ່ຈະຕ້ອງພິຈາລະນາການຄັດເລືອກຕົວປ່ຽນອິດສະຫຼະອອກໃນການວິເຄາະຜົນກະທົບຂອງໂຄງການອະນຸລັກອຸທິຍານແຫ່ງຊາດນ້ຳແອດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງຄົວເຮືອນໃນເຂດກຸ່ມບ້ານເປົ້າໝາຍຂອງໂຄງການ ຢູ່ເມືອງຮ້ຽມ ແຂວງຫົວພັນ. ສະນັ້ນ, ສາມາດສະຫຼຸບໄດ້ວ່າບັນດາປັດໄຈອາຊີບ (ຫຼັກ ແລະ ສຳຮອງ) ແລະ ເນື້ອທີ່ດິນ (ນາ, ໄຮ່, ສວນ, ໜອງປາ) ທີ່ໄດ້ຮັບຜົນກະທົບ ທີ່ໄດ້ກຳນົດຂຶ້ນມາເພື່ອໃຊ້ໃນການສຶກສາຄັ້ງ

ນີ້ແມ່ນມີຄວາມອິດສະຫຼະຕໍ່ກັນສູງ ແລະ ສາມາດນຳໃຊ້ເຂົ້າໃນການວິເຄາະຂັ້ນຕໍ່ໄປໄດ້ (ລາຍລະອຽດແມ່ນສະແດງໃນຕາຕະລາງ 3.1).

### 3.2 ຜົນກະທົບຂອງໂຄງການອະນຸລັກ ຢູ່ກອງຄຸ້ມຄອງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງປະຊາຊົນຢູ່ ເມືອງຮ້ຽມ ແຂວງຫົວພັນ

ຈາກຜົນການທົດສອບສົມຜົນຖົດຖອຍແບບພະຫຸຄູນຂອງແບບຈຳລອງໃນ (ຕາຕະລາງທີ 3.2) ພົບວ່າ ຄ່າສະຖິຕິທົດສອບບັນຫາວ່າຄວາມຄາດເຄື່ອນແຕ່ລະຄ່າມີຄວາມເປັນອິດສະຫຼະຕໍ່ກັນ ດ້ວຍວິທີ Durbin-Watson Statistic ພົບວ່າຄ່າ Durbin-Watson = 1.734 ເຊິ່ງມີຄ່າຢູ່ລະຫວ່າງເກນ 1.5-2.5 (ເຂົ້າໃກ້ 2) ສະແດງວ່າຄວາມຄາດເຄື່ອນແຕ່ລະຄ່າມີຄວາມເປັນອິດສະຫຼະຕໍ່ກັນ ຫຼື ບໍ່ມີຄວາມສຳພັນກັນເອງຂອງຕົວຄາດເຄື່ອນ ຈຶ່ງບໍ່ເຮັດໃຫ້ເກີດບັນຫາ Autocorrelation ແລະ ຜ່ານການທົດສອບຄ່າສະຖິຕິທົດສອບຄ່າສະຖິຕິ ANOVA ຫຼື ການທົດສອບຄວາມແປປວນຂອງຕົວປ່ຽນ (F = 6.814) ແລະ ມີລະດັບຄວາມສຳຄັນທາງສະຖິຕິ (Sig = 0.01) ສະແດງວ່າ: ແບບຈຳລອງຜົນກະທົບຂອງໂຄງການອະນຸລັກອຸທິຍານແຫ່ງຊາດນໍ້າແອດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງຄົວເຮືອນໃນເຂດກຸ່ມບ້ານເປົ້າໝາຍຂອງໂຄງການ ແມ່ນສາມາດນຳໃຊ້ໄດ້ ແລະ ຂຶ້ນຢູ່ກັບປັດໄຈທີ່ກຳນົດມາຢ່າງໜ້ອຍ 1 ປັດໄຈ. ເຊິ່ງຜ່ານການກວດສອບຄຸນສົມບັດຂອງແບບຈຳລອງພົບວ່າ ຄ່າສຳປະສິດການຕັດສິນໃຈ R Square = 0.764 ເຊິ່ງໝາຍຄວາມວ່າ ເສດຖະກິດຂອງຄົວເຮືອນທີ່ໄດ້ຮັບຜົນກະທົບ ສາມາດອະທິບາຍດ້ວຍຕົວປ່ຽນອິດສະຫຼະທີ່ກຳນົດຂຶ້ນມາໃນລະດັບ 76.40%, ສ່ວນທີ່ເຫຼືອ 23.60% ແມ່ນຂຶ້ນຢູ່ກັບປັດໄຈອື່ນໆທີ່ບໍ່ໄດ້ນຳເຂົ້າມາສຶກສາຄັ້ງນີ້. ເຊິ່ງສາມາດນຳມາສ້າງແບບຈຳລອງທາງດ້ານເສດຖະມິຕິໄດ້ດັ່ງນີ້:

$$\text{REV} = 3{,}380{,}474.094 + 405{,}849.609X_1 - 113514.039X_2 - 536{,}860.837X_3 + 40{,}919.645X_4 + 237{,}207.662X_5 + 2{,}576{,}033.133\,X_6 + \varepsilon$$

(t-test $X_1$ = 2.343)$^{**}$ (t-test $X_2$ = -0.975)$^{ns}$ (t-test $X_3$ = -1.754)$^{*}$ (t-test $X_4$ = 0.996)$^{***}$ (t-test $X_5$ = 1.739)$^{**}$ (t-test $X_6$ = 6.459)$^{***}$

ຕົວເລກໃນວົງເລັບເປັນຄ່າສະຖິຕິ t-statistic

* ແທນໃຫ້ລະດັບຄວາມສຳຄັນທາງສະຖິຕິ 0.1

** ແທນໃຫ້ລະດັບຄວາມສຳຄັນທາງສະຖິຕິ 0.05

*** ແທນໃຫ້ລະດັບຄວາມສຳຄັນທາງສະຖິຕິ 0.0

ຈາກແບບຈຳລອງຂ້າງເທິງ ສາມາດອະທິບາຍຜົນຂອງຕົວປ່ຽນອິດສະຫຼະ ທີ່ສາມາດພະຍາກອນຕົວປ່ຽນຕາມ ຄື ລະດັບປັດໄຈທີ່ມີຜົນຕໍ່ເສດຖະກິດຂອງຄົວເຮືອນ ໃນສ້າງຕັ້ງເຂດອະນຸລັກອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ດັ່ງນີ້:

1) ປັດໄຈດ້ານອາຊີບຫຼັກ ເຫັນວ່າມີຄ່າ Sig ເທົ່າກັບ 0.020 ນ້ອຍກວ່າ 0.05 ໝາຍຄວາມວ່າປະຕິເສດສົມມຸດຖານຫຼັກ $H_0$ ແລະ ຍອມຮັບສົມມຸດຖານເລືອກ $H_1$ ສະນັ້ນ ຕົວປ່ຽນອິດສະຫຼະດ້ານອາຊີບຫຼັກມີຄວາມ ສຳພັນກັບ ຕົວປ່ຽນຕາມ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ແລະ ມີຄ່າ B ເທົ່າກັບ 3.140 ສະແດງວ່າ ອາຊີບຫຼັກຂອງຄົວເຮືອນໄດ້ສົ່ງຜົນກະທົບດ້ານລົບ (-) ຕໍ່ເສດຖະກິດຂອງຄົວເຮືອນ ຜ່ານລາຍໄດ້ຈາກອາຊີບຫຼັກ, ເຊິ່ງອາຊີບຫຼັກຂອງຄົວເຮືອນສ່ວນຫຼາຍ ແມ່ນອາຊີບຊາວກະສິກອນເຊິ່ງຂາດລາຍໄດ້ທີ່ມາຈາກການເຮັດອາຊີບນັ້ນໆ ເຊິ່ງມັນສົ່ງຜົນກະທົບດ້ານລົບ (-) ຕໍ່ເສດຖະກິດຂອງຄົວເຮືອນ.

2) ປັດໄຈດ້ານອາຊີບສຳຮອງ ເຫັນວ່າມີຄ່າ Sig ເທົ່າກັບ 0.330 ໃຫຍ່ກວ່າ 0.05 ບໍ່ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າຍອມຮັບ ສົມ ມຸດ ຖານ ຫຼັກ $H_0$ ແລະປະຕິເສດສົມມຸດຖານເລືອກ $H_1$ ສະນັ້ນ ຕົວປ່ຽນອິດສະຫຼະດ້ານອາຊີບສຳຮອງບໍ່ມີ ຄວາມສຳພັນກັບຕົວປ່ຽນຕາມໝາຍຄວາມວ່າ ຕົວປ່ຽນດ້ານອາຊີບສຳຮອງຂອງຄົວເຮືອນໃນເຂດອະນຸລັກອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ບາງອາຊີບແມ່ນບໍ່ໄດ້ຮັບຜົນກະທົບຈາກການສ້າງຕັ້ງເຂດອະນຸລັກອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ເນື່ອງຈາກອາຊີບຫຼັກ ແລະ ສຳຮອງສ່ວນໃຫຍ່ແມ່ນຊາວກະສິກອນ ເຊິ່ງມັນໄດ້ຮັບຜົນກະທົບຢູ່ໃນອາຊີບຫຼັກແລ້ວ. ສະນັ້ນ, ຕົວປ່ຽນອາຊີບສຳຮອງຈຶ່ງບໍ່ມີຜົນກະທົບຕໍ່ເສດຖະກິດຂອງຄົວເຮືອນເທົ່າທີ່ຄວນ.

3) ປັດໄຈດ້ານເນື້ອທີ່ດິນນາ ເຫັນວ່າມີຄ່າ Sig ເທົ່າກັບ 0.061 ໃຫຍ່ກວ່າ 0.10 ໝາຍຄວາມວ່າ ປະຕິເສດ ສົມມຸດຖານ ຫຼັກ $H_0$ ແລະ ຍອມຮັບສົມມຸດຖານເລືອກ $H_1$. ສະນັ້ນ, ຕົວປ່ຽນອິດສະຫຼະດ້ານເນື້ອທີ່ດິນນາ ມີຄວາມສຳພັນກັບຕົວປ່ຽນຕາມ ໝາຍຄວາມວ່າຕົວປ່ຽນດ້ານເນື້ອທີ່ດິນນາສົ່ງຜົນກະທົບດ້ານບວກ (+) ຕໍ່ເສດຖະກິດຂອງຄົວເຮືອນ ຜ່ານລາຍໄດ້ຈາກການຂາຍຜົນຜະລິດເຂົ້າ. ເນື່ອງຈາກຄົວເຮືອນສ່ວນຫຼາຍແມ່ນໄດ້ຮັບຜົນກະທົບຈາກການເຂດອະນຸລັກອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ໂດຍສະເພາະແມ່ນເນື້ອທີ່ດິນນາທີ່ຢູ່ໃນເຂດອະນຸລັກ, ແຕ່ພາກລັດກໍ່ໄດ້ມີການຈັດສັນທີ່ດິນທຳການຜະລິດຄືນໃໝ່ໃຫ້ກັບຄົວເຮືອນທີ່ໄດ້ຮັບຜົນກະທົບຄືນໃໝ່.

4) ປັດໄຈດ້ານເນື້ອທີ່ດິນໄຮ່ ເຫັນວ່າມີຄ່າ Sig ເທົ່າກັບ 0.004 ນ້ອຍກວ່າ 0.05 ໝາຍຄວາມວ່າປະຕິເສດ ສົມມຸດຖານຫຼັກ $H_0$ ແລະ ຍອມຮັບສົມມຸດຖານເລືອກ $H_1$. ສະນັ້ນ, ຕົວປ່ຽນອິດສະຫຼະເນື້ອທີ່ດິນໄຮ່ ມີຄວາມສຳພັນກັບຕົວປ່ຽນຕາມ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ແລະ ມີຄ່າ B ເທົ່າກັບ 7.059 ສະແດງວ່າ ຕົວປ່ຽນດ້ານເນື້ອທີ່ດິນໄຮ່ໄດ້ຮັບຜົນກະທົບ ໝາຍຄວາມວ່າຕົວປ່ຽນດ້ານເນື້ອທີ່ດິນໄຮ່ສົ່ງຜົນກະທົບດ້ານບວກ (+) ຕໍ່ເສດຖະກິດຂອງຄົວເຮືອນ ຜ່ານລາຍໄດ້ຈາກການຂາຍຜົນຜະລິດເຂົ້າໄຮ່ ແລະ ພືນລະປູກ. ແຕ່ເນື່ອງຈາກເນື້ອທີ່ດິນໄຮ່ຂອງຄົວເຮືອນສ່ວນຫຼາຍແມ່ນໄດ້ຮັບຜົນກະທົບຈາກການເຂດອະນຸລັກອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ໂດຍສະເພາະແມ່ນເນື້ອທີ່ດິນໄຮ່ທີ່ຢູ່ໃນເຂດອະນຸລັກອຸທິຍານແຫ່ງຊາດ, ອີງໃສ່ນະໂຍບາຍການຢຸດຕິການຖາງປ່າແບບເລື່ອນລອຍ ເຮັດຫຼາຍຄົວເຮືອນບໍ່ສາມາດກັບໄປເຮັດໄຮ່ທຳການປູກເຂົ້າ, ສາລີ...ໄດ້ ຈຶ່ງສົ່ງຜົນກະທົບດ້ານລົບ (-) ຕໍ່ເສດຖະກິດຂອງຄົວເຮືອນ ໃນເຂດອະນຸລັກອຸທິຍານ ແຫ່ງຊາດ ນ້ຳແອດ-ພູເລີຍ.

5) ປັດໄຈດ້ານເນື້ອທີ່ດິນສວນ ເຫັນວ່າມີຄ່າ Sig ເທົ່າກັບ 0.036 ນ້ອຍກວ່າ 0.05 ໝາຍຄວາມວ່າ ປະຕິເສດສົມມຸດຖານຫຼັກ $H_0$ ແລະ ຍອມຮັບສົມມຸດຖານເລືອກ $H_1$ ສະນັ້ນ ຕົວປ່ຽນອິດສະຫຼະເນື້ອທີ່ດິນສວນ ມີຄວາມ ສຳພັນກັບ ຕົວປ່ຽນຕາມ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ແລະ ມີຄ່າ B ເທົ່າກັບ 1.104 ສະແດງວ່າ ຕົວປ່ຽນດ້ານເນື້ອທີ່ດິນສວນໄດ້ຮັບຜົນກະທົບຈາກການສ້າງຕັ້ງເຂດອະນຸລັກອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ. ເຊິ່ງເນື້ອທີ່ດິນສວນລຸດລົງກໍ່ຈະສົ່ງຜົນຕໍ່ຜົນຜະລິດລຸດລົງ ເມື່ອຜົນຜະລິດລຸດລົງກໍ່ຈະສົ່ງຜົນຕໍ່ລາຍໄດ້ຂອງຄົວເຮືອນລຸດລົງ ເມື່ອລາຍໄດ້ຂອງຄົວເຮືອນລຸດລົງກໍ່ຈະສົ່ງຜົນກະທົບເສດຖະກິດຂອງຄົວເຮືອນທີ່ຢູ່ໃນເຂດອະນຸລັກອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ.

6) ປັດໄຈດ້ານເນື້ອທີ່ໜອງປາໜອງ ເຫັນວ່າມີຄ່າ Sig ເທົ່າກັບ 0.000 ນ້ອຍກວ່າ 0.05 ໝາຍຄວາມວ່າ ປະຕິເສດສົມມຸດຖານຫຼັກ $H_0$ ແລະ ຍອມຮັບສົມມຸດຖານເລືອກ $H_1$. ສະນັ້ນ, ຕົວປ່ຽນອິດສະຫຼະເນື້ອທີ່ໜອງປາ ມີຄວາມສຳພັນກັບຕົວປ່ຽນຕາມ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ແລະ ມີຄ່າ B ເທົ່າກັບ 6.389 ສະແດງວ່າ ຕົວປ່ຽນດ້ານເນື້ອທີ່ໜອງປາກໍ່ໄດ້ຮັບຜົນກະທົບຈາກການສ້າງຕັ້ງເຂດອະນຸລັກອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ. ເຊິ່ງເນື້ອທີ່ດິນທີ່ເປັນໜອງປາລຸດລົງກໍ່ຈະສົ່ງຜົນຕໍ່ຈຳນວນປາທີ່ລ້ຽງລຸດລົງ ເມື່ອຈຳນວນປາທີ່ລ້ຽງລຸດລົງກໍ່ຈະສົ່ງຜົນຕໍ່ລາຍໄດ້ຂອງຄົວເຮືອນລຸດລົງ ເມື່ອລາຍໄດ້ຂອງຄົວເຮືອນລຸດລົງກໍ່ຈະສົ່ງຜົນກະທົບເສດຖະກິດຂອງຄົວເຮືອນທີ່ຢູ່ໃນເຂດອະນຸລັກອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ.

## 4. ວິພາກຜົນ

ຈາກຜົນການວິເຄາະຜົນກະທົບຂອງໂຄງການອະນຸລັກອຸດທິຍານແຫ່ງຊາດນ້ຳແອັດ-ພູເລີຍ ຕໍ່ກັບສະພາບເສດຖະກິດຂອງປະຊາຊົນເມືອງຮ້ຽມ ແຂວງຫົວພັນ ໂດຍການວິເຄາະສົມຜົນຖົດຖອຍພະຫຸຄູນ (Multiple Regression) ມາປະເມີນຄ່າສຳປະສິດຂອງຕົວປ່ຽນອິດສະຫຼະທີ່ມີຕໍ່ຕົວປ່ຽນຕາມ ດ້ວຍວິທີກຳລັງສອງນ້ອຍສຸດ (Ordinary Least Squares: OLS) ໃນຄັ້ງນີ້ ສອດຄ່ອງກັບຜົນການສຶກສາທີ່ຜ່ານມາ ກ່ຽວກັບຜົນກະທົບຂອງໂຄງການຕໍ່ກັບສະພາບເສດຖະກິດຂອງປະຊາຊົນ ສາມາດນຳມາວິພາກຜົນໄດ້ດັ່ງນີ້:

ປັດໄຈດ້ານອາຊີບຫຼັກ ເຫັນວ່າຄວາມສຳຄັນທາງສະຖິຕິ 0.05, ຕົວປ່ຽນອິດສະຫຼະດ້ານອາຊີບຫຼັກມີຄວາມ ສຳພັນກັບຕົວປ່ຽນຕາມ ສະແດງວ່າ ອາຊີບຫຼັກຂອງຄົວເຮືອນ

ໄດ້ສົ່ງຜົນກະທົບດ້ານລົບ (-) ຕໍ່ເສດຖະກິດຂອງຄົວເຮືອນ ຜ່ານລາຍໄດ້ຈາກອາຊີບຫຼັກ, ເຊິ່ງອາຊີບຫຼັກຂອງຄົວເຮືອນ ສ່ວນຫຼາຍ ແມ່ນອາຊີບຊາວກະສິກອນ ເຊິ່ງຂາດລາຍໄດ້ທີ່ມາຈາກການເຮັດອາຊີບນັ້ນໆ ເຊິ່ງມັນສົ່ງຜົນກະທົບດ້ານລົບ (-) ຕໍ່ເສດຖະກິດຂອງຄົວເຮືອນ. ແລະ ປັດໄຈດ້ານອາຊີບສຳຮອງແມ່ນບໍ່ມີ ຄວາມສຳພັນກັບຕົວປ່ຽນຕາມ ໝາຍຄວາມວ່າຕົວປ່ຽນດ້ານອາຊີບສຳຮອງຂອງຄົວເຮືອນໃນເຂດອະນຸລັກອຸທິຍານແຫ່ງຊາດນ້ຳແອດ-ພູເລີຍ ບາງອາຊີບແມ່ນບໍ່ໄດ້ຮັບຜົນກະທົບຈາກການສ້າງຕັ້ງເຂດອະນຸລັກອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ເນື່ອງຈາກອາຊີບຫຼັກ ແລະ ສຳຮອງສ່ວນໃຫຍ່ແມ່ນຊາວກະສິກອນ ເຊິ່ງມັນໄດ້ຮັບຜົນກະທົບຢູ່ໃນອາຊີບຫຼັກແລ້ວ. ສະນັ້ນ ຕົວປ່ຽນອາຊີບສຳຮອງຈຶ່ງບໍ່ມີຜົນກະທົບຕໍ່ເສດຖະກິດຂອງຄົວເຮືອນເທົ່າທີ່ຄວນ. ເຊິ່ງຜົນການຄົ້ນຄວ້າໃນຄັ້ງນີ້ ແມ່ນສອດຄ່ອງກັບຜົນການຄົ້ນຄວ້າອິດສະຫຼະຂອງ (ສຸວິດ ຈັນແສນຕໍ, 2000). ທີ່ຄົ້ນຄວ້າກ່ຽວກັບ ຜົນກະທົບທາງເສດຖະກິດຂອງຊາວກະສິກອນ ທີ່ເຂົ້າຮ່ວມໂຄງການປັບໂຄງສ້າງການຜະລິດກະສິກຳຂອງເມືອງໄຊຍະປາການ ແຂວງຊຽງໃໝ່. ເຊິ່ງຜົນການຄົ້ນຄວ້າອິດສະຫຼະໃນຫົວຂໍ້ດັ່ງກ່າວເຫັນວ່າ: ອາຊີບຫຼັກ, ອາຊີບສຳຮອງຂອງຄົວເຮືອນ ແລະ ທີ່ດິນທຳການຜະລິດຫຼັງເຂົ້າຮ່ວມໂຄງການປັບໂຄງສ້າງການຜະລິດກະສິກຳນັ້ນມີ ສ່ວນເຮັດໃຫ້ລາຍຮັບຂອງຄົວເຮືອນມີການປ່ຽນແປງໃນທິດທາງທີ່ດີຂຶ້ນ.

ປັດໄຈດ້ານເນື້ອທີ່ດິນນາ ເຫັນວ່າມີ ຄວາມສຳພັນກັບຕົວປ່ຽນຕາມ ໝາຍຄວາມວ່າຕົວປ່ຽນດ້ານເນື້ອທີ່ດິນນາສົ່ງຜົນກະທົບດ້ານບວກ (+) ຕໍ່ເສດຖະກິດຂອງຄົວເຮືອນ ຜ່ານລາຍໄດ້ຈາກການຂາຍຜົນຜະລິດເຂົ້າ. ເນື່ອງຈາກຄົວເຮືອນສ່ວນຫຼາຍແມ່ນໄດ້ຮັບຜົນກະທົບຈາກການເຂດອະນຸລັກອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ໂດຍສະເພາະແມ່ນເນື້ອທີ່ດິນນາທີ່ຢູ່ໃນເຂດອະນຸລັກ, ແຕ່ພາກລັດກໍ່ໄດ້ມີການຈັດສັນທີ່ດິນທຳການຜະລິດຄືນໃໝ່ໃຫ້ກັບຄົວເຮືອນທີ່ໄດ້ຮັບຜົນກະທົບຄືນໃໝ່. ສ່ວນປັດໄຈດ້ານເນື້ອທີ່ດິນໄຮ່ ແລະ ປັດໄຈດ້ານເນື້ອທີ່ດິນສວນ ທັງ 2 ປັດໄຈນີ້ເຫັນວ່າ ມີຄວາມສຳພັນ ກັບ ຕົວປ່ຽນຕາມ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ສະແດງວ່າ ຕົວປ່ຽນດ້ານເນື້ອທີ່ດິນໄຮ່ໄດ້ຮັບຜົນກະທົບ ໝາຍຄວາມວ່າຕົວປ່ຽນດ້ານເນື້ອທີ່ດິນໄຮ່ສົ່ງຜົນກະທົບດ້ານບວກ (+) ຕໍ່ເສດຖະກິດຂອງຄົວເຮືອນ ຜ່ານລາຍໄດ້ຈາກການຂາຍຜົນຜະລິດເຂົ້າໄຮ່ ແລະ ພືນລະປູກ. ແຕ່ເນື່ອງຈາກເນື້ອທີ່ດິນໄຮ່ຂອງຄົວເຮືອນສ່ວນຫຼາຍແມ່ນໄດ້ຮັບຜົນກະທົບຈາກການເຂດອະນຸລັກອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ໂດຍສະເພາະແມ່ນເນື້ອທີ່ດິນໄຮ່ທີ່ຢູ່ໃນເຂດອະນຸລັກອຸທິຍານແຫ່ງຊາດ, ອີງໃສ່ນະໂຍບາຍການຢຸດຕິການຖາງປ່າແບບເລື່ອນລອຍເຮັດຫຼາຍຄົວເຮືອນບໍ່ສາມາດກັບໄປເຮັດໄຮ່ທຳການປູກເຂົ້າ, ສາລີ...ໄດ້ ຈຶ່ງສົ່ງຜົນກະທົບດ້ານລົບ (-) ຕໍ່ເສດຖະກິດຂອງຄົວເຮືອນ ໃນເຂດອະນຸລັກອຸທິຍານ ແຫ່ງຊາດ ນ້ຳແອດ-ພູເລີຍ. ຕົວປ່ຽນອິດສະຫຼະເນື້ອທີ່ດິນສວນ ມີຄວາມສຳພັນ ກັບ ຕົວປ່ຽນຕາມ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ສະແດງວ່າ ຕົວປ່ຽນດ້ານເນື້ອທີ່ດິນສວນໄດ້ຮັບຜົນກະທົບຈາກການສ້າງຕັ້ງເຂດອະນຸລັກອຸທິຍານແຫ່ງຊາດນ້ຳແອດ-ພູເລີຍ. ເຊິ່ງເນື້ອທີ່ດິນສວນລຸດລົງກໍ່ຈະສົ່ງຜົນຕໍ່ຜົນຜະລິດລຸດລົງ ເມື່ອຜົນຜະລິດຫຼຸດລົງກໍ່ຈະສົ່ງຜົນຕໍ່ລາຍໄດ້ຂອງຄົວເຮືອນລຸດລົງ ເມື່ອລາຍໄດ້ຂອງຄົວເຮືອນລຸດລົງກໍ່ຈະສົ່ງຜົນກະທົບເສດຖະກິດຂອງຄົວເຮືອນທີ່ຢູ່ໃນເຂດອະນຸລັກອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ. ສ່ວນປັດໄຈດ້ານເນື້ອທີ່ໜອງປາໜອງ ເຫັນວ່າ ຕົວປ່ຽນອິດສະຫຼະເນື້ອທີ່ໜອງປາ ມີຄວາມສຳພັນກັບຕົວປ່ຽນຕາມ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ສະແດງວ່າ ຕົວປ່ຽນດ້ານເນື້ອທີ່ໜອງປາກໍ່ໄດ້ຮັບຜົນກະທົບຈາກການສ້າງຕັ້ງເຂດອະນຸລັກອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ. ເຊິ່ງເນື້ອທີ່ດິນທີ່ເປັນໜອງປາລຸດລົງກໍ່ຈະສົ່ງຜົນຕໍ່ຈຳນວນປາທີ່ລ້ຽງລຸດລົງ ເມື່ອຈຳນວນປາທີ່ລ້ຽງລຸດລົງກໍ່ຈະສົ່ງຜົນຕໍ່ລາຍໄດ້ຂອງຄົວເຮືອນລຸດລົງ ເມື່ອລາຍໄດ້ຂອງຄົວເຮືອນລຸດລົງກໍ່ຈະສົ່ງຜົນກະທົບເສດຖະກິດຂອງຄົວເຮືອນທີ່ຢູ່ໃນເຂດອະນຸລັກອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ. ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ (ສຸກທະວີ ວົງຄຳແຫງ, 2021). ທີ່ຄົ້ນຄວ້າກ່ຽວກັບການປະເມີນຜົນກະທົບ ຈາກການອານຸລັກ ປ່າໂຄກໂອງມັງ ແຫ່ງຊາດ ເມືອງຊົນບຸລີ ແຂວງສະຫ້ວນນະເຂດ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາ ໄລແຫ່ງຊາດ, ຜົນໄດ້ຮັບຈາກການສຶກສາ

ໃນນີ້ແມ່ນ ການປະເມີນຜົນກະທົບທີ່ມີຕໍ່ລາຍຮັບປະຈຳປີ ຂອງຄົວເຮືອນຈາກຕົວຢ່າງ 241 ຕົວຢ່າງພົບວ່າບັນດາຕົວ ປ່ຽນອິນສະຫຼະສາມາດອະທິບາຍຕົວປ່ຽນຕາມໄດ້ 76.45% ເຊິ່ງຕົວປ່ຽນອິດສະຫຼະໃນແບບຈຳລອງທີ່ມີຜົນຕໍ່ລາຍຮັບ ຂອງກຸ່ມທີ່ເຂົ້າຮ່ວມໂຄງການຄື: ເພດ, ຊົນເຜົ່າ, ອາຊີບ, ກຸ່ມເຂົ້າຮ່ວມໂຄງການ, ເຄື່ອງປ່າຂອງດົງ, ປີ, ປີທົດລອງ, ການເຂົ້າຮ່ວມໂຄງການແມ່ນມີການພົວພັນກັບລາຍຮັບ ຂອງຄົວເຮືອນເຊິ່ງເປັນໄປຕາມຂໍ້ສົມມຸດຖານທີ່ຕັ້ງໄວ້ໝາຍ ຄວາມວ່າຖ້າຄົວເຮືອນເຂົ້າຮ່ວມໂຄງການຈະເຮັດໃຫ້ລາຍ ຮັບຄົວເຮືອນເພີ່ມຂຶ້ນ 19.7%ຂອງລາຍຮັບຄົວເຮືອນເມື່ອ ທຽບໃສ່ຄົວເຮືອນທີ່ບໍ່ໄດ້ເຂົ້າຮ່ວມໂຄງການ ດ້ວຍລະດັບ ຄວາມເຊື່ອໝັ້ນ 99% ໃນທາງສະຖິຕິກໍ່ຍ້ອນວ່າກຸ່ມຄົວ ເຮືອນເຂົ້າຮ່ວມໂຄງການຈະໄດ້ຮັບການຊ່ວຍເຫຼືອທາງດ້ານ ຝຶກອົບຮົມ ແລະ ການສົ່ງເສີມຄວາມຮູ້ຄວາມສາມາດ ເຊັ່ນ ວ່າ: ເຂົ້າເປັນທີມງານລາດຕະເວນໃຫ້ກັບໂຄງການ, ສົ່ງເສີມ ການລ້ຽງສັດ, ເຄື່ອງຫັດຖະກຳ (ຕໍ່າຫູກ) ເພື່ອເປັນສິນຄ້າ. ທັງນີ້, ກໍ່ສາມາດເປັນສ່ວນໜຶ່ງໃນການສ້າງລາຍຮັບໃຫ້ຄົວ ເຮືອນເພີ່ມຂຶ້ນ. ພ້ອມດຽວກັນນັ້ນຍັງສອດຄ່ອງກັບຜົນການ ຄົ້ນຄວ້າຂອງ (ເລ່ ວົງເພັດ, 2009). ໄດ້ສຶກສາ: ສະພາບ ເສດຖະກິດ-ສັງຄົມຂອງປະຊາຊົນບ້ານຫ້ວຍເກືອກັບການ ນຳໃຊ້ຊັບພະຍາກອນປ່າໄມ້ໃນປ່າສະຫງວນແຫ່ງຊາດເຊ ປຽນ. ຈຸດປະສົງຂອງການສຶກສາຄື: ວິເຄາະເສດຖະກິດ - ສັງ ຄົມ ບ້ານຫ້ວຍເກືອ, ວິເຄາະພຶດຕິກຳ ແລະ ບັນຫາຂອງການ ນຳໃຊ້ຊັບພະຍາ ກອນປ່າໄມ້ຂອງປະຊາຊົນ ແລະ ວິເຄາະວິທີ ການຄຸ້ມຄອງຊັບພະຍາກອນແບບຍືນຍົງຂອງປະຊາຊົນບ້ານ ຫ້ວຍເກືອ ຜົນການສຶກສາພົບວ່າ ວິທີການນຳໃຊ້ປ່າໄມ້ ແບບຍືນຍົງຂອງປະຊາຊົນຄື: ການບໍ່ນຳໃຊ້ໄມ້ແບບຟູມ ເຟືອຍຈະຊ່ວຍຮັກສາໄດ້ ມີ 56.41% ລາຍໄດ້ຈາກແຫຼ່ງ ອື່ນໆໄດ້ພົວພັນຕໍ່ກັບການນຳໃຊ້ທີ່ດິນທຳການຜະລິດ ແລະ ຊັບພະຍາກອນປ່າໄມ້.

## 5. ສະຫຼຸບ

ໃນການກວດສອບຄວາມສຳພັນລະຫວ່າງຕົວປ່ຽນ ອິດສະຫຼະແຕ່ລະຕົວຈະໃຊ້ການຫາຄ່າສຳປະສິດສະຫະສຳພັນ ຂອງຕົວປ່ຽນອິດສະຫຼະດ້ວຍວິທີຂອງ ເພຍສັນ (Pearson Correlation Coefficients) ຈາກຜົນການປະມານຄ່າໃນ (ຕາະລາງ 3.1) ເຫັນໄດ້ວ່າ ຄ່າສຳປະສິດສະຫະສຳພັນໃນ ຮູບແບບ Correlation Matrix ຂອງຕົວປ່ຽນອິດສະຫຼະ ດ້ວຍກັນທີ່ມີຄ່າສູງກວ່າ 0.80 ຫຼື 80% ຂຶ້ນໄປ ແມ່ນບໍ່ມີ ເລີຍດ້ວຍລະດັບຄວາມເຊື່ອໝັ້ນ 99% ແລະ 95%, ສະ ແດງວ່າ ຕົວປ່ຽນອິດສະຫຼະມີຄວາມສຳພັນກັນແຕ່ບໍ່ໄດ້ມີ ຄວາມສຳພັນກັນສູງ ຫຼື ສູງເກີນໄປ ມາດຕະຖານທີ່ທາງສະຖິ ຕິໄດ້ກຳນົດໄວ້ຈຶ່ງກໍໃຫ້ເກີດພາວະ Multi-collinearity. ແລະ ຈາກຜົນການວິເຄາະຜົນກະທົບຂອງໂຄງການອະນຸລັກ ອຸດທິຍານແຫ່ງຊາດນ້ຳແອັດ-ພູເລີຍ ຕໍ່ກັບສະພາບເສດຖະ ກິດຂອງປະຊາຊົນເມືອງຮ້ຽມ ແຂວງຫົວພັນ ໃນ 7 ບ້ານ ເປົ້າໝາຍເຊິ່ງຕົວປ່ຽນປະກອບມີ 2 ດ້ານໃຫຍ່ຄື: ປັດໄຈ ດ້ານອາຊີບ ມີ 2 ປັດໄຈ ແລະ ປັດໄຈດ້ານການຖືຄອງທີ່ດິນ ປະກອບມີ 4 ດ້ານ ເປັນຕົວປ່ຽນຮ່ວມພະຍາກອນ ຕົວປ່ຽນ ຕາມ ພົບວ່າ ປັດໄຈທີ່ມີຜົນຕໍ່ຜົນກະທົບຂອງໂຄງການອະນຸ ລັກອຸທິຍານແຫ່ງຊາດນ້ຳແອດ-ພູເລີຍ ຕໍ່ກັບ ສະພາບ ເສດຖະກິດຂອງຄົວເຮືອນໃນເຂດກຸ່ມບ້ານເປົ້າໝາຍຂອງ ໂຄງການ ຫຼາຍກວ່າໝູ່ ນັ້ນແມ່ນ ຕົວປ່ຽນ ທີ່ດິນທຳການ ຜະລິດ (ດິນນາ, ດິນໄຮ່, ດິນສວນ). ສະນັ້ນ, ທາງໂຄງ ການຄວນມີການຈັດສັນທີ່ດິນທຳການຜະລິດໃຫ້ກັບປະຊາ ຊົນຜູ້ທີ່ໄດ້ຮັບຜົນກະທົບ ເພື່ອໃຫ້ເຂົາເຈົ້າໄດ້ມີທີ່ດິນທຳ ການຜະລິດ ແລະ ສາມາດສ້າງລາຍຮັບໃຫ້ກັບຄອບຄົວ. ນອກນັ້ນ, ຄວນມີການສະໜັບສະໜູນໃນດ້ານການຝຶກອົບ ຮົມທາງດ້ານເຕັກນິກວິຊາການກ່ຽວກັບການປູກຝັງ, ສະ ໜອງແນວພັນພືດທີ່ໄດ້ມີການປັບປຸງສະມັດຖະພາບ, ການ ຈັດສັນ ແລະ ປັບປຸງລະບົບນ້ຳ, ເຕັກນິກການປ້ອງກັນ ແລະ ປາບສະຕູພືດ, ມີເຄື່ອງຮັບໃຊ້ໃນການຜະລິດທີ່ຂ້ອນຂ້າງທັນ ສະໄໝ ແລະ ອື່ນໆໃຫ້ແກ່ພວກເຂົາ, ສິ່ງຜົນເຮັດໃຫ້ລາຍ ຮັບຈາກການປູກຝັງສ່ວນນີ້ເພີ່ມຂຶ້ນ.

## 6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າໃນນາມທີມຄົ້ນຄວ້າວິທະຍາສາດ ຂໍ ປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການ ດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກ ສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນ ໃດ ພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກົມປ່າໄມ້ (2019). ໂຄງການ ການສະໜັບສະໜູນການຄຸ້ມຄອງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ໄລຍະ VI

Bounthavy Siphanthong et al. (2022). The Impact of Exchange Rates on Macroeconomic Factors in Lao PDR from 2012-2021. Souphanouvong University Journal of Multidisciplinary Research and Development. Volume 8. Issue 2. Jul – Dec 2022. pp. 234 – 245.

Forestry Department (2019). Support project for the management of the Nam Et - Phou Louey National Park Conservation Project, Phase VI.

Kanoukkada Manordniran. ( 2013) . Factors affecting household income. Current Economic Issues Research Report, Faculty of Economics, Chiang Mai University (Thailand). Page 7

Kampheng Natvichit Sikammo. ( 2021) . Evaluating Research and Development Impacts: Basic Principles and Practices" PhD Thesis, Department of Agricultural Economics and Resources, Faculty of Economics, Kasetsart University.

Le Vongphet. ( 2009) . The socio-economic condition of the people of Huai Zha village with the use of forest resources in the Seven National Park. Thesis, Faculty of Economics and Business Management, National University of Laos.

Nachapong Janjula (2017). Impacts of the UTOKVIBHATPRASIT Irrigation Gate Management on the Household Economy of Artisanal Fishing. Faculty of Humanities and Social Sciences, Prince of Songkla University, Pattani Campus.

Nouhuk Khantivong. (2016). Income from forest products of the people of Nong Buang Village, Pathumphon District, Champasak Province. Thesis, Faculty of Economics and Business Management, National University of Laos.

Office of Planning and Investment, Statistical Center of Hiem District, Houaphan Province (2022). The implementation of the 5 -year socio-economic development plan VIII (2015-2019) and the direction of the 5 -year socio-economic development plan IX (2020-2024) of Hiem District, Houaphan Province.

Phoutthaphon Luckseevy and Santi Souksaart. (2011). Increasing the forest resources of the people around the protected forest area of Nam Pui National Forest Reserve, Xayabuli Province. Faculty of Economics and Business Management, National University of Laos.

Souvit Senchantor. (2000). The economic impact of farmers participating in the project to restructure agricultural production in Sayapakan District, Chiang Mai Province. Independent research in economics at the university. Chiang Mai University.

Soukthavy Vongkhamheng. (2021) Assessment of the impact of the conservation of Kok Ongman National Forest, Chonbuli District, Suwannakhet Province. Thesis, Faculty of Economics and Business Management, National University of Laos.

United National Found For Population Activities. (2015). Sustainable development theory Goals in Lao PDR. United Nations Lao PDR.

Vongkhamheng and Pirasak. (2002). Eld's Deer (Cervus Eldiisiamensis) Serveys in Chonbuly District, Savannakhet Province, Lao PDR. VientianeF Lao the Wildlife Conservation Association.

Wasan Monsang and Jiraporn Tangkittipaporn. (2018). Public Opinions on Environmental Impacts Management after the Construction of Mae Kuang Udom Thara Dam, Chiang Mai Province. Veridian E-Journal, Silpakorn University. ISSN 1906 – 3431. Pp. 2660-2676.

World Bank. (2016). Trends in maternal mortality: 1990-2015: estimates from WHO, UNICEF, UNFPA, World Bank Group, and the United Nations Population Division.

**ຕາຕະລາງທີ 3.1:** ສະແດງຄວາມສຳພັນຂອງບັນດາຕົວປ່ຽນອິດສະຫຼະ ແບບ Pearson Correlation Coefficients

ຄ່າສຳປະສິດສະຫະສຳພັນ **(Correlations)**

| | $X_1$ (ອາຊີບຫຼັກ) | $X_2$ (ອາຊີບຫຼັງ) | $X_3$ (ເນື້ອທີ່ດິນນາ) | $X_4$ (ເນື້ອທີ່ດິນໄຮ່) | $X_5$ (ເນື້ອທີ່ດິນສວນ) | $X_6$ (ເນື້ອທີ່ໜອງປາ) |
|---|---|---|---|---|---|---|
| $X_1$ (ອາຊີບຫຼັກ) | 1 | 0.050 | -0.044 | -0.045 | 0.056 | -0.039 |
| $X_2$ (ອາຊີບຫຼັງ) | 0.050 | 1 | -0.143* | 0.034 | 0.110 | 0.035 |
| $X_3$ (ເນື້ອທີ່ດິນນາ) | -0.044 | -0.143* | 1 | 0.035 | 0.054 | 0.155* |
| $X_4$ (ເນື້ອທີ່ດິນໄຮ່) | -0.045 | 0.034 | 0.035 | 1 | 0.001 | 0.031 |
| $X_5$ (ເນື້ອທີ່ດິນສວນ) | 0.056 | 0.110 | 0.054 | 0.001 | 1 | -0.004 |
| $X_6$ (ເນື້ອທີ່ໜອງປາ) | -0.039 | 0.035 | 0.155* | 0.031 | -0.004 | 1 |
| $X_7$ (ເນື້ອທີ່ດິນແຮ) | -0.062 | 0.015 | 0.446** | 0.040 | -0.018 | 0.086 |
| $X_8$ (ເນື້ອທີ່ດິນປຸກສ້າງ) | -0.023 | -0.065 | 0.228** | 0.000 | -0.005 | 0.090 |

*. Correlation is significant at the 0.05 level (2-tailed).

**. Correlation is significant at the 0.01 level (2-tailed).

ແຫຼ່ງຂໍ້ມູນ: ຈາກຜົນຂອງການຄຳນວນຜ່ານ Microsoft Excel version 2022

**ຕາຕະລາງ 3.2:** ຜົນການປະມານຄ່າສຳປະສິດການຖົດຖອຍຂອງປັດໄຈທີ່ໄດ້ຮັບຜົນກະທົບທີ່ສົ່ງຜົນຕໍ່ເສດຖະກິດຄົວເຮືອນ

| ຄ່າສຳປະສິດ (Coefficients) | | | | | |
|---|---|---|---|---|---|
| ປັດໄຈ | Unstandardized Coefficients | | Standardized Coefficients | t-test | Sig. |
| | B | Std. Error | Beta | | |
| Constants | 3380474.094 | 517213.028 | | 6.536 | 0.000*** |
| $X_1$ (ອາຊີບຫຼັກ) | 405849.609 | 173187.113 | 3.140 | 2.343 | 0.020** |
| $X_2$ (ອາຊີບສຳຮອງ) | -113514.039 | 116405.173 | -1.059 | -0.975 | 0.330$^{ns}$ |
| $X_3$ (ເນື້ອທີ່ດິນນາ) | -536860.837 | 306122.779 | -2.122 | -1.754 | 0.061* |
| $X_4$ (ເນື້ອທີ່ດິນໄຮ່) | 40919.645 | 41102.791 | 7.059 | 0.996 | 0.004*** |
| $X_5$ (ເນື້ອທີ່ດິນສວນ) | 237207.662 | 136394.564 | 1.104 | 1.739 | 0.036** |
| $X_6$ (ເນື້ອທີ່ໜອງປາ) | 2576033.133 | 398854.385 | 6.389 | 6.459 | 0.000*** |

ແຫຼ່ງຂໍ້ມູນ: ການເກັບກຳຈາກແບບສອບຖາມ ແລະ ການຄຳນວນດ້ວຍໂປຣແກມທາງສະຖິຕິ (SPSS version 22)

$Sig. \leq 0.1$ ມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.1 ຫຼື ດ້ວຍລະດັບຄວາມເຊື່ອໝັ້ນ 90%

$Sig. \leq 0.05$ ມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ຫຼື ດ້ວຍລະດັບຄວາມເຊື່ອໝັ້ນ 95%

$Sig. \leq 0.01$ ມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.01 ຫຼື ດ້ວຍລະດັບຄວາມເຊື່ອໝັ້ນ 99%

ns Non-Significant ໝາຍເຖິງ ບໍ່ມີຄວາມສຳຄັນທາງສະຖິຕິ

R = 0.764
R Square = 0.743
Adjusted R Square = 0.206
Durbin-Watson = 1.734
F = 6.814
Sig = 0.000